# ມິຊຊາສຳລັບຜູ້ລ່ວງລັບ



**ພຣະວໍລະສານໂດຍນັກບຸນມັດເທວ 25, 31-46**

ເມື່ອບຸດແຫ່ງມະນຸດຈະສະເດັດມາເຕັມດ້ວຍສິມຸງຄຸນແລະແຫ່ແຫນດ້ວຍຝູງເທວະດາທັງຫລາຍ, ເວລານັ້ນພຣະອົງຈະປະທັບເທິງພຣະບັນລັງຂອງພຣະອົງ.ນານາຊາດຈະຊຸມນຸມກັນເຂົ້າມາຢູ່ຕໍ່ພຣະພັກຂອງພຣະອົງ ແລະພຣະອົງຈະແຍກພວກເຂົາອອກຈາກກັນຄືກັນກັບນາຍຊຸມພາບານແຍກແກະອອກຈາກແບ້, ແກະໄວ້ເບື້ອງຂວາແລະແບ້ໄວ້ເບື້ອງຊ້າຍ.

ເວລານັ້ນພຣະມະຫາກະສັດຈະກ່າວກັບພວກຢູ່ເບື້ອງຂວາວ່າ: ເຊີນເຂົ້າມາ, ພວກເຈົ້າຜູ້ໄດ້ຮັບພຣະພອນຈາກພຣະບິດາຂອງເຮົາ ເຊີນມາຮ່ວມສ່ວນໃນອານາຈັກທີ່ໄດ້ຈັດຕຽມໄວ້ສຳລັບພວກເຈົ້າຕັ້ງແຕ່ສ້າງໂລກ. ຍ້ອນວ່າ ເວລາເຮົາຫິວເຂົ້າ, ພວກເຈົ້າໄດ້ເອົາເຂົ້າໃຫ້ກິນ. ເວລາເຮົາຫິວນ້ຳ, ພວກເຈົ້າໄດ້ເອົານ້ຳໃຫ້ດື່ມ. ເວລາເຮົາເປັນແຂກເດີນທາງ, ພວກເຈົ້າໄດ້ຕ້ອນຮັບ. ເວລາເຮົາເປືອຍເປົ່າຢູ່, ພວກເຈົ້າໄດ້ເອົາເສື້ອຜ້າໃຫ້ນຸ່ງຫົ່ມ. ເວລາເຮົາເຈັບເປັນ, ພວກເຈົ້າໄດ້ເບິ່ງແຍງ. ເວລາເຮົາຖືກກັກຂັງ, ພວກເຈົ້າໄດ້ມາຢ້ຽມຢາມ.

ເວລານັ້ນບັນດາຜູ້ຊອບທັມຈະຕອບພຣະອົງວ່າ: ພຣະອົງເຈົ້າ, ເວລາໃດພວກຂ້າພະເຈົ້າເຫັນພຣະອົງຫິວເຂົ້າ ແລະໄດ້ເອົາເຂົ້າໃຫ້ພຣະອົງກິນ? ເຫັນພຣະອົງຫິວນ້ຳ ແລະໄດ້ເອົານ້ຳໃຫ້ພຣະອົງດື່ມ? ເຫັນພຣະອົງເຈັບເປັນຫລືຖືກກັກຂັງ ແລະໄດ້ໄປຢ້ຽມຢາມພຣະອົງ?

ແລະພຣະມະຫາກະສັດຈະຕອບພວກເຂົາວ່າ: ເຮົາກ່າວແກ່ພວກເຈົ້າເປັນຄວາມຈິງວ່າ: ທຸກເທື່ອທີ່ພວກເຈົ້າໄດ້ປະຕິບັດຕໍ່ພີ່ນ້ອງຜູ້ຕ່ຳຕ້ອຍທີ່ສຸດຂອງເຮົາ ພວກເຈົ້າກໍໄດ້ປະຕິບັດຕໍ່ເຮົາເອງ.

ຕໍ່ໄປພຣະອົງຈະກ່າວກັບພວກຢູ່ເບື້ອງຊ້າຍວ່າ: ສ່ວນພວກເຈົ້າສັນຊາດຊົ່ວ, ຮີບໜີໄປໄກເຮົາ. ໄປສູ່ໄຟນິລັນດອນທີ່ໄດ້ຕຽມໄວ້ສຳລັບຜີປີສາດແລະພວກເທວະດາໝູ່ຂອງມັນ. ຍ້ອນວ່າ ເວລາເຮົາຫິວເຂົ້າ, ພວກເຈົ້າບໍ່ໄດ້ເອົາເຂົ້າໃຫ້ກິນ. ເວລາເຮົາຫິວນ້ຳ, ພວກເຈົ້າບໍ່ໄດ້ເອົານ້ຳໃຫ້ດື່ມ. ເວລາເຮົາເປັນແຂກເດີນທາງ, ພວກເຈົ້າກໍບໍ່ໄດ້ຕ້ອນຮັບ. ເວລາເຮົາເປືອຍເປົ່າຢູ່, ພວກເຈົ້າກໍບໍ່ໄດ້ເອົາເສື້ອຜ້າໃຫ້ນຸ່ງຫົ່ມ. ເວລາເຮົາເຈັບເປັນຫລືຖືກກັກຂັງ, ພວກເຈົ້າກໍບໍ່ໄດ້ໄປຢ້ຽມຢາມເລີຍ.

ເວລານັ້ນພວກເຂົາຈຶ່ງຈະຖາມພຣະອົງວ່າ: ພຣະອົງເຈົ້າ, ເວລາໃດພວກຂ້າພະເຈົ້າໄດ້ເຫັນພຣະອົງຫິວເຂົ້າ ,ຫິວນ້ຳ, ເປັນແຂກເດີນທາງ, ເປືອຍເປົ່າຢູ່, ເຈັບເປັນຫລືຖືກກັກຂັງ ແລະພວກຂ້າພະເຈົ້າບໍ່ໄດ້ຊ່ວຍພຣະອົງເລີຍ?

ພຣະອົງຈະຕອບພວກເຂົາວ່າ: ເຮົາກ່າວແກ່ພວກເຈົ້າເປັນຄວາມຈິງວ່າ: ທຸກເທື່ອທີ່ພວກເຈົ້າບໍ່ໄດ້ປະຕິບັດຕໍ່ຜູ້ໃດຜູ້ໜຶ່ງໃນບັນດາຜູ້ຕ່ຳຕ້ອຍນີ້, ພວກເຈົ້າກໍບໍ່ໄດ້ປະຕິບັດຕໍ່ເຮົາດ້ວຍ. ແລ້ວພວກເຂົາຈະແຍກກັນໄປພວກລະທາງ: ພວກຊົ່ວຊ້ານີ້ຈະໄປສູ່ຄວາມທໍລະມານຕະຫລອດນິລັນດອນ. ພວກຊອບທັມຈະໄປສູ່ຊີວິດນິລັນດອນ.

*ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ*

**ບົດແບ່ງປັນ: ມທ 25, 31-46**

ພວກເຮົາບໍ່ວ່າຈະເຊື່ອຖືແລະປະຕິບັດທັມໃນສາດສະໜາພຸດ ຫລືສາດສະໜາກາໂທລິກກໍຕາມ, ພວກເຮົາເຄີຍມີເຄົາລົບທຳນຽມໃນການທຳບຸນອຸທິດສ່ວນກຸສົນໃຫ້ຜູ້ເປັນແລະຜູ້ຕາຍ. ທາງສາດສະໜາພຸດກໍມີການໃສ່ບາດຢາດນ້ຳ, ການສ້າງກອງບຸນ, ການໃຫ້ທານແລະກິດຈະກຸສົນອື່ນໆ. ສ່ວນທາງສາດສະໜາກາໂທລິກກໍມີການຂໍມິຊຊາ, ການສວດພາວະນາ, ການທຳບຸນໃຫ້ທານແກ່ຜູ້ທຸກຍາກ. ກິດຈະກຸສົນທີ່ພວກເຮົາກະທຳນີ້ໃນຄວາມເຊື່ອແລະຄວາມຫວັງວ່າຜູ້ທີ່ພວກເຮົາອຸທິດໃຫ້ຈະໄດ້ຮັບຕາມທີ່ພວກເຮົາທານ.

ແຕ່ຄຳສອນຂອງພຣະເຢຊູເຈົ້າໃນວັນນີ້ຢາກຊ່ວຍພວກເຮົາໃຫ້ເຂົ້າໃຈເລິກເຊິ່ງກວ່າອີກເຖິງການທຳບຸນກຸສົນ. ພຣະອົງຢາກໃຫ້ພວກເຮົາມີວິໄສທັດທີ່ກວ້າງ, ມີດວງໃຈເມດຕາຫລາຍຂຶ້ນ ແລະມີຄວາມອີດູສົງສານອັນບໍ່ພຽງແຕ່ໃນຂອບເຂດຍາດຕິພີ່ນ້ອງມິດສະຫາຍ ຫລືຜູ້ທີ່ພວກເຮົາຮູ້ຈັກເທົ່ານັ້ນ. ແຕ່ສຳລັບໝົດທຸກຄົນ, ໂດຍສະເພາະແມ່ນຄົນຍາກຈົນ. ພຣະເຢຊູເຈົ້າກ່າວວ່າ ເມື່ອເຖິງວັນສິ້ນໂລກພຣະອົງຈະກັບມາເໝືອນດັ່ງກະສັດພ້ອມກັບພວກນິກອນເທວະດາເພື່ອສອບຖາມພວກເຮົາແຕ່ລະຄົນ ແລະພຣະອົງຈະແຍກຄົນດີອອກຈາກຄົນບໍ່ດີ. ຄົນທັມມະເພິ່ນຈະໃຫ້ຢູ່ຂ້າງຂວາ ສ່ວນຄົນອະທັມເພິ່ນຈະໃຫ້ຢູ່ຂ້າງຊ້າຍ. ຄົນທັມມະຈະໄດ້ເຂົ້າໃນບ່ອນທີ່ມີແຕ່ແສງສະວ່າງແລະຄວາມສຸກ ອັນແມ່ນເມືອງສະຫວັນ. ສ່ວນຄົນອະທັມຈະໄປບ່ອນທີ່ມີແຕ່ຄວາມມືດແລະຄວາມທໍລະມານ ອັນແມ່ນນະລົກ.

ພວກເຮົາອາດຈະຕັ້ງຄຳຖາມວ່າ ອີງເທິງຂໍ້ມູນແລະຫລັກການອັນໃດພຣະເຢຊູຈຶ່ງກະທຳດັ່ງນີ້? ຄຳຕອບທີ່ພວກເຮົາສາມາດພົບເຫັນໄດ້ໃນຄຳເທດສະໜາສັ່ງສອນຂອງພຣະອົງໃນວັນນີ້ແມ່ນຄວາມຮັກເມດຕາ. ຄວາມຮັກເມດຕາທີ່ບໍ່ມີເງື່ອນໄຂແລະຈຳກັດ. ພວກເຮົາອາດຈະມີຄຳຖາມອີກວ່າ ເປັນຫຍັງພຣະເຢຊູເຈົ້າຈຶ່ງຕັດສິນພວກເຮົາດ້ວຍຄວາມຮັກເມດຕາ? ຄຳຕອບຄືຍ້ອນພຣະອົງເປັນອົງແຫ່ງຄວາມຮັກ. ຄວາມຮັກຂອງພຣະເຢຊູເຈົ້າສະແດງອອກຢ່າງໃດ? ສະແດງອອກຢູ່ບ່ອນວ່າພຣະອົງເອງເປັນຜູ້ສັກສິດເປັນພຣະເຈົ້າ,ແຕ່ພຣະອົງລົງມາເກີດເປັນມະນຸດເພື່ອປົດປ່ອຍມະນຸດອອກຈາກຄວາມທຸກທໍລະມານແລະຄວາມຕາຍຍ້ອນບາບ, ເພື່ອຈະໄດ້ພາມະນຸດກັບຄືນເມືອຫາພຣະອົງ. ເພາະສະນັ້ນຜູ້ທີ່ເປັນລູກສິດຂອງພຣະເຢຊູເຈົ້າຕ້ອງເປັນຄົນທີ່ມີໃຈຮັກເມດຕາຕໍ່ຄົນອື່ນ. ເປັນຄົນທີ່ຮູ້ຈັກແບ່ງເບົາຄວາມທຸກໂສກຂອງຄົນອື່ນ. ຄວາມເມດຕາກາລຸນານີ້ສະແດງອອກດ້ວຍການຮູ້ຈັກແບ່ງປັນຕໍ່ຄົນທີ່ດ້ອຍໂອກາດກວ່າພວກເຮົາ, ຕໍ່ຄົນທີ່ບໍ່ສາມາດຊ່ວຍຕົວເອງໄດ້, ຕໍ່ຄົນຕົກທຸກໄດ້ຍາກ. ຕໍ່ຄົນຢູ່ໃນຄວາມສິ້ນຫວັງ. ຍ້ອນຫຍັງ? ຍ້ອນວ່າຄົນທີ່ຕົກທຸກໄດ້ຍາກແລະຕ່ຳນ້ອຍນີ້ແມ່ນພຣະເຢຊູເຈົ້ານັ້ນເອງ. ເພາະພຣະອົງກ່າວວ່າ: « ທຸກຄັ້ງທີ່ພວກເຈົ້າກະທຳຕໍ່ຄົນຕ່ຳນ້ອຍແລະທຸກຍາກ ແມ່ນເຮົາເອງທີ່ພວກເຈົ້າກະທຳ ».

ຫລາຍຄັ້ງພວກເຮົາຄິດວ່າ ພຣະເຈົ້າຕ້ອງສະຖິດຢູ່ບ່ອນສູງແລະຢູ່ຫ່າງໄກຈາກມະນຸດ. ແຕ່ອັນທີ່ຈິງ, ພຣະອົງປະທັບຢູ່ໃນບ່ອນທີ່ພວກເຮົາບໍ່ຄິດບໍ່ຝັນ, ພຣະອົງຊ້ອນຕົວຢູ່ໃນຄົນທີ່ພວກເຮົາບໍ່ໃຫ້ຄວາມສຳຄັນ. ແລະເປັນຕົ້ນ, ພຣະອົງປະທັບຢູ່ໃນດວງໃຈຂອງພວກເຮົາແຕ່ລະຄົນ. ແຕ່ພວກເຮົາບໍ່ຮູ້ຈັກ. ຍ້ອນດວງໃຈຂອງພວກເຮົາເປັນວັດ, ເປັນວິຫານບ່ອນທີ່ພຣະອົງປະທັບຢູ່. ສິ່ງນີ້ແລເຮັດໃຫ້ມະນຸດມີຄຸນຄ່າ ແລະມີຄວາມເທົ່າທຽມກັນຕໍ່ໜ້າພຣະເຈົ້າ.

ຂໍໃຫ້ບຸນກຸສົນທີ່ພວກເຮົາອຸທິດໃຫ້ດວງວິນຍານທີ່ລ່ວງລັບໄປໃນວັນນີ້ ຈົ່ງໄປຮອດໄປເຖິງພວກເຂົາ. ຂໍໃຫ້ພວກເຂົາຈົ່ງໄດ້ຢູ່ໃນສະຖານທີ່ສັກສິດອັນມີແຕ່ແສງສະວ່າງແລະຄວາມສຸກອັນແມ່ນເມືອງສະຫວັນນັ້ນເທີ້ນ. ອາແມນ.

ຄຸນພໍ່ ອົງຕວນ ກຽດຕິສັກ